ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 3499 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ 2018

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຈັດຕັ້ງ ແລະ ພະນັກງານ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ການຄົ້ນຄວ້ານຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ລັດຖະມົນຕີ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງກົມຈັດຕັ້ງ ແລະ ພະນັກງານ ແນໃສ່ເພື່ອຮັບປະກັນການເຄື່ອນໄຫວວຽກງານຈັດຕັ້ງ ແລະ ພະນັກງານ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມຈັດຕັ້ງ ແລະ ພະນັກງານ ຂຽນດ້ວຍຕົວອັກສອນຫຍໍ້ວ່າ "ຈຕພ" ແມ່ນການຈັດຕັ້ງໜຶ່ງສັງກັດໃນໂຄງປະກອບກົງຈັກຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການໃຫ້ຄະນະພັກ, ຄະນະນຳກະຊວງ ໃນວຽກງານຄົ້ນຄວ້າສັງລວມ, ນະໂຍບາຍ ແລະ ແຂ່ງຂັນ-ຍ້ອງຍໍ, ຄຸ້ມຄອງ ແລະ ພັດທະນາລັດຖະກອນ, ກົງຈັກ ແລະ ການຈັດຕັ້ງ, ວຽກງານພັກ ແລະ ອົງການຈັດຕັ້ງມະຫາຊົນ ແລະ ວຽກງານປ້ອງກັນພັກ ແລະ ພະນັກງານ ໃນຂອບເຂດຄວາມຮັບຜິດຊອບຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

### ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງຕ່າງໆ ຂອງພັກ, ລະບຽບກົດໝາຍຂອງລັດ, ແຜນຍຸດທະສາດ, ແຜນພັດທະນາວຽກງານແຮງງານ ແລະ ສະຫວັດດີການສັງຄົມ ມາເປັນແຜນການ, ແຜນງານ ແລະ ໂຄງການ ຂອງກົມຈັດຕັ້ງ ແລະ ພະນັກງານ ພ້ອມທັງສະຫຼຸບລາຍງານ ໃຫ້ຄະນະພັກ, ຄະນະນຳກະຊວງ ໃນແຕ່ລະໄລຍະ;